Lycée Français International de Vientiane Josué-Hoffet

ÉTABLISSEMENT CONVENTIONNÉ aefe Agence pour l'enseignement français à l'étranger

# ນັກຮຽນທີ່ບໍ່ເວົ້າພາສາຝຣັ່ງ

ໂຮງຮຽນຝຣັ່ງນາໆຊາດວຽງຈັນ *(LFIV)* ມີນັກຮຽນບາງຈຳນວນທີ່ບໍ່ເວົ້າພາສາຝຣັ່ງ.
ຄວນຮັບຮູ້ວ່າໃນໂຮງຮຽນເດັກຮຽນພາສາຝຣັ່ງເພື່ອໃຫ້ຮູ້ເວົ້າ, ຮູ້ອ່ານ, ຮູ້ຂຽນ ແລະ ຮູ້ນັບເລກເປັນພາສາຝຣັ່ງ , ເຊັ່ນດຽວກັນພວກເຂົານຳໄຊ້ພາສາຝຣັ່ງໃນການຮຽນວິຊາຮຽນອື່ນໆອີກເຊັ່ນ : ວິທະຍາສາດ, ພູມສາດ, ປະຫວັດສາດ, ໄຊ້ໃນການຫຼິ້ນດົນຕີ, ໄຊ້ໃນການຫຼິ້ນກິລາ ແລະ ຍັງໄຊ້ໃນການຮຽນລອຍນໍ້າ ທັງໝົດນີ້ແມ່ນຕອ້ງໄຊ້ພາສາຝຣັ່ງ. ໃນຊົ່ວໂມງຮຽນພາສາອາຈານຈະຕີລາຄາຄວາມສາມາດດ້ານພາສາເທົ່ານັ້ນ.
ເດັກຮຽນໃນຫອ້ງຮຽນທົ່ວໄປຕາມເກນອາຍຸແຕ່ພວກເຂົາຈະໄດ້ຮັບການສິດສອນພາສາຝຣັ່ງເປັນພິເສດປະມານ 2 ຫາ 3ຊົ່ວໂມງ ໃນໜຶ່ງອາທິດ ພອ້ມກັບນັກຮຽນທີ່ມາໃໝ່ໃນຫອ້ງ *(FLSCO)* ແລະ ຫຼື ນັກຮຽນຫອ້ງອື່ນ.

.

## *ຢູ່ເຮືອນ ສຳຄັນທີ່ເດັກຕອ້ງສືບຕໍ່ຮຽນເວົ້າພາສາແມ່.*

## ເພື່ອຊວ່ຍເຫຼືອລູກທ່ານ

ໃນທຸກໆກໍລະນີຈຳເປັນຫຼາຍທີ່ທ່ານຈະຕອ້ງອະທິບາຍໃຫ້ເດັກຮູ້ວ່າຍອ້ນຫຍັງຜູ້ປົກຄອງເລືອກໃຫ້ພວກເຂົາຮຽນໃນໂຮງຮຽນຝຣັ່ງ.
ເຊັ່ນດຽວກັນພວກເຮົາຕອ້ງການໃຫ້ພາສາຝຣັ່ງຖືກເວົ້າ ແລະ ຖືກຟັງຢູ່ເຮືອນເພື່ອເປັນການສ້າງການພົວພັນກັບໂຮງຮຽນ.
**ເພື່ອຊວ່ຍເຫຼືອລູກທ່ານ ທ່ານສາມາດ:**

### ຖ້າທ່ານເວົ້າພາສາຝຣັ່ງ ຫຼື ກັບຄູສອນພິເສດ :

- ເບິ່ງໂທລະພາບເປັນພາສາຝຣັ່ງ: ຊອ້ງ TV5 Monde ທີ່ມີລາຍການໜັງກາຕູນ ວັນຈັນ ເຖິງ ວັນສຸກ 16h-17h, ວັນເສົາ ແລະ ວັນອາທິດ 8h30-10h.

- ໄປທີ່ສະຖາບັນຝຣັ່ງເປັນປະຈຳ : ໄປທີ່ຫອ້ງສະໝຸດເພື່ອຢືມປຶ້ມ ຫຼື ອ່ານປຶ້ມ, ເບິ່ງໜັງ, ເບິ່ງໜັງກາຕູນ, ຟັງເພງ, ໄປເບິ່ງການສະແດງຕ່າງໆທີ່ມີສະເໜີ, ໄປເບິ່ງຮູບເງົາໃນວັນພຸດຕອນສວຍ.

- ຕອນຄໍ່າຂອງທຸກໆມື້ໃຫ້ອ່ານຄືນບົດຮຽນທີ່ໄດ້ຮຽນໃນຊົ່ວໂມງຮຽນປົກກະຕິ ແລະ ຖາມໃນບົດຮຽນທີ່ບໍ່ເຂົ້າໃຈ.

- ອ່ານປຶ້ມທີ່ເປັນພາສາຝຣັ່ງ, ຕໍ່ມາຕັ້ງຄຳຖາມຄວາມເຂົ້າໃຈ ແລະ ແປຄຳສັບຖ້າຈຳເປັນ .

- ຫຼິ້ນເກມ ຫຼື ການລະເຫຼັ້ນຕ່າງໆເປັນພາສາຝຣັ່ງ.

- ນຳໄຊ້ຖານຂໍ້ມູນທີ່ລະບຸດັ່ງຕໍ່ໄປນີ້.

### ຖ້າທ່ານບໍ່ເວົ້າພາສາຝຣັ່ງ :

- ເບິ່ງໂທລະພາບເປັນພາສາຝຣັ່ງ: ຊອ້ງ TV5 Monde ທີ່ມີລາຍການ ໜັງກາຕູນ ວັນຈັນ ເຖິງ ວັນສຸກ 16h-17h, ວັນເສົາ ແລະ ວັນອາທິດ 8h30-10h.

- ໄປທີ່ສະຖາບັນຝຣັ່ງເປັນປະຈຳ : ໄປທີ່ຫອ້ງສະໝຸດເພື່ອຢືມປຶ້ມ ຫຼື ອ່ານປຶ້ມ, ເບິ່ງໜັງ, ເບິ່ງໜັງກາຕູນ, ຟັງເພງ, ໄປເບິ່ງການສະແດງຕ່າງໆທີ່ມີສະເໜີ, ໄປເບິ່ງຮູບເງົາໃນວັນພຸດຕອນສວຍ.

- ແລະ ເປັນຫຍັງທ່ານເອງບໍ່ຮຽນເພີ້ມພາສາຝຣັ່ງ ?

- ນຳໄຊ້ຖານຂໍ້ມູນທີ່ລະບຸດັ່ງຕໍ່ໄປນີ້.

Lycée Français International de Vientiane Josué-Hoffet

ÉTABLISSEMENT CONVENTIONNÉ aefe Agence pour l'enseignement français à l'étranger

# ບັນດາຂໍ້ມູນ -

- ສະຖາບັນຝຣັ່ງ: ຖະໜົນລ້ານຊ້າງ, +856 21 215 764, www.if-laos.org

- ເວບໄຊ (ຊັ້ນອານຸບານ ແລະ ຊັ້ນປະຖົມ) :

ເວບໄຊຂອງຊ່ອງໂທລະພາບ TV5 Monde : https://asia.tv5monde.com/ , www.tivi5mondeplus.com/

ເວບໄຊການສຶກສາ : www.mondedestitounis.fr/ , www.iletaitunehistoire.com/

- ວິດີໂອໃນລະບົບຢູທູບ : T'choupi / Petit Ours brun / L'âne Trotro / Peppa Pig en français / Père castor / Le petit Nicolas.

ຊົ່ວໂມງຮຽນພາສາຝຣັ່ງສຳລັບຜູ້ໃຫຍ່

| | |
|---|---|
| ສະຖານທີ່ ? | **ສະຖາບັນຝຣັ່ງ**<br>ຖະໜົນລ້ານຊ້າງ, BP 6572<br>ວຽງຈັນ, ສປປ ລາວ |
| ເວລາ ? | ໃນຊ່ວງກາງເວັນ, ໃນຊ່ວງກາງຄືນ<br>ແລະ ເຊັ່ນດຽວກັນໃນວັນເສົາ. |
| ຕິດຕໍ່ | ເບີໂທ : (856-21)215764<br>ເບີແຟກ : (856-21)215766<br>www.if-laos.org |

### ຫ້ອງສະໝຸດ ສູນຂອງຂໍ້ມູນ (BCD)

ສະເໜີນັກຮຽນຊັ້ນປະຖົມເອກະສານທຸກໆຊະນິດ : ປຶ້ມ, ວາລະສານ, ປຶ້ມກາຕູນ, ເວບໄຊ້ ແລະ ອື່ນໆ.

ຜູ້ຮັບຜິດຊອບຫ້ອງສະໝຸດໂດຍປະສານກັບຄູເພື່ອສົ່ງເສີມ ແລະ ພັດທະນາການຮຽນຮູ້ແຕ່ລະໄລຍະໂດຍຈະຊອກເອກະສານຫຼາຍຮູບແບບມາໃຫ້ເດັກໄດ້ອ່ານ ແລະ ຮຽນ.

## CDI-BCD du LFIV

### ສູນຂໍ້ມູນ ແລະ ຂ່າວສານ (CDI)

ສະເໜີນັກຮຽນຊັ້ນມັດທະຍົມເອກະສານທຸກໆຊະນິດ : ປຶ້ມ, ວາລະສານ, ເວບໄຊ້ ແລະ ອື່ນໆ.

ຜູ້ຮັບຜິດຊອບສູນຂໍ້ມູນ ແລະ ຂ່າວສານ ໂດຍປະສານກັບຄູເພື່ອສົ່ງເສີມ ແລະ ພັດທະນາການຮຽນຮູ້ແຕ່ລະໄລຍະໂດຍຈະຊອກເອກະສານຫຼາຍຮູບແບບມາໃຫ້ເດັກໄດ້ອ່ານ ແລະ ຮຽນ.